## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດທີ 18 ມິຖຸນາ 2023 (06-18-2023)

---

### ເອລີແລະຊາມູເອນ

*ແມ່ນຫຍັງເປັນບົດຮຽນນຶ່ງທີ່ທ່ານໄດ້ຮຽນຮູ້ຜ່ານຄວາມລົ້ມເຫຼວ?*

**ຈຸດສຳຄັນໃນບົດຮຽນ:** ຢ່າປ່ອຍໃຫ້ຄວາມຜິດພາດໃນອະດີດມາຂັດຂວາງທ່ານຈາກການເປັນພີ່ລ້ຽງທີ່ມີປະສິດທິພາບ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

"ຍິ່ງໃຫຍ່ທີ່ສຸດຕລອດການ" ນີ້ແມ່ນການໂຕ້ວາທີຢ່າງຕໍ່ເນື່ອງໃນໂລກກິລາ. ແມ່ນໃຜຄືໂກທ (**G.O.A.T**)? ຫຍໍ້ມາຈາກ ("**G**reatest **O**f **A**ll **T**imes"). ສິ່ງທີ່ສູນເສັຽໄປໃນການໂຕ້ວາທີແມ່ນຂໍ້ເທັດຈິງທີ່ວ່າ: ຄວາມສຳເລັດມັກຈະມາພ້ອມກັບຄວາມລົ້ມເຫຼວ. ເບບ ຣູທ(Babe Ruth) ຖືວ່າເປັນນຶ່ງໃນນັກຕີກິລາເບສບອລ(baseball)ທີ່ຍິ່ງໃຫຍ່ທີ່ສຸດຕລອດການ ດ້ວຍການແລ່ນໂຮມຣັນ (home runs) ເຖິງ 714 ຄັ້ງ. ສິ່ງທີ່ພວກເຮົາມອງບໍ່ເຫັນແມ່ນຂໍ້ເທັດຈິງທີ່ວ່າ ເບບ ຣູທ ເຂົ້າມາຕີຮວມທັງໝົດ 8,399 ເທື່ອ, ແຕ່ລາວຕີໄດ້ (ສຳເລັດ) ແຕ່ພຽງ 1,330 ເທື່ອ. ລາວມີຄວາມລົ້ມເຫຼວຫຼາຍກ່ວາຄວາມສຳເລັດ.

ໃນຖານະເປັນຜູ້ຕິດຕາມອົງພຣະເຢຊູຄຣິດ, ພວກເຮົາຈະມີປະສົບການເໝືອນກັນໃນການລົ້ມເຫຼວແລະໃນການສຳເລັດ. ຢ່າງໃດກໍຕາມ, ການລົ້ມເຫຼວ, ມັນບໍ່ໄດ້ກຳນົດພວກເຮົາ. ພວກເຮົາອາດຈະລົ້ມເຫຼວບາງຄັ້ງບາງຄາວ. ເມື່ອສິ່ງນັ້ນເກີດຂຶ້ນ, ມັນເປັນສິ່ງສຳຄັນທີ່ພວກເຮົາຈະຕ້ອງກ້າວໄປຂ້າງໜ້າ, ໂດຍຮູ້ຂໍ້ເທັດຈິງທີ່ສຳຄັນສອງຢ່າງຄື ອັນທີນຶ່ງ: **ພຣະເຈົ້າຊົງເປັນພຣະເຈົ້າແຫ່ງໂອກາດທີສອງ.** ພຣະອົງຈະບໍ່ຊົງປະຖິ້ມພວກເຮົາ ຫຼື ພຣະອົງຈະບໍ່ຊົງເລີກຮັກພວກເຮົາ. ພຣະອົງຊົງກຳລັງດຶງພວກເຮົາ. ອັນທີສອງ: **ພຣະເຈົ້າຊົງສາມາດໃຊ້ຄວາມລົ້ມເຫຼວເຫຼົ່ານັ້ນໃຫ້ເກີດປໂຍດໃນຊີວິດຂອງພວກເຮົາ.** ໂດຍຜ່ານຄວາມລົ້ມເຫຼວ, ພວກເຮົາສາມາດຮຽນຮູ້ບົດຮຽນທີ່ສຳຄັນ. ສິ່ງເຫຼົ່ານັ້ນແມ່ນບົດຮຽນທີ່ພວກເຮົາສາມາດຖ່າຍທອດສິ່ງຕໍ່ໃຫ້ຄົນອື່ນໄດ້.

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

### 1. 1 ຊາມູເອນ 2:22-26

*22ດຽວນີ້ ເອລີ ໄດ້ເຖົ້າແກ່ຫຼາຍແລ້ວ, ເພິ່ນໄດ້ຍິນຫຼາຍເຣື່ອງທີ່ລູກຊາຍຂອງເພິ່ນເຮັດຕໍ່ພວກອິສຣາເອນ: ເປັນຕົ້ນພວກເຂົາໄດ້ເປັນຊູ້*
*ກັບພວກຜູ້ຍິງທີ່ມາບົວລະບັດຮັບໃຊ້ຢູ່ຕໍ່ໜ້າຫໍເຕັນສັກສິດ 23ດັ່ງນັ້ນເພິ່ນຈຶ່ງເວົ້າຕໍ່ພວກເຂົາວ່າ, "ເປັນຫຍັງພວກເຈົ້າຈຶ່ງເຮັດສິ່ງເຫຼົ່ານີ້?*
*ຫຼາຍຄົນໄດ້ບອກຂ້ອຍກ່ຽວກັບພຶດຕິກຳອັນຊົ່ວຊ້າຂອງພວກເຈົ້າ. 24ລູກເອີຍຈົ່ງເຊົາເຮັດການເຫຼົ່ານີ້ສາເຖີ້ນ ພວກໄພ່ພົນຂອງພຣະຜູ້-*
*ເປັນເຈົ້າໄດ້ເວົ້າກ່ຽວກັບເຣື່ອງບໍ່ດີນີ້ເລື້ອຍໆ. 25ຖ້າວ່າຜູ້ນຶ່ງເຮັດຜິດຕໍ່ຄົນອື່ນ, ພຣະເຈົ້າຊົງປ້ອງກັນລາວໄດ້ ແຕ່ວ່າເມື່ອຜູ້ນຶ່ງເຮັດຜິດຕໍ່*
*ສູ້ພຣະເຈົ້າ ແມ່ນໃຜຈະສາມາດປ້ອງກັນລາວໄວ້ໄດ້?" ແຕ່ພວກເຂົາບໍ່ໄດ້ຟັງຄວາມພໍ່ ເພາະວ່າພຣະຜູ້ເປັນເຈົ້າຊົງຕັດສິນພຣະທັຍ*
*ແລ້ວວ່າ ຈະປະຫານຊີວິດຂອງພວກເຂົາ. 26ເດັກຊາຍ ຊາມູເອນ ໄດ້ໃຫຍ່ເຕີບໂຕຂຶ້ນ, ພຣະຜູ້ເປັນເຈົ້າແລະມະນຸດກໍພໍໃຈນຳລາວ*
*ເລື້ອຍໆມາ.*

ພວກເຮົາໄດ້ພົບກັບ ເອລີ ໃນເຣື່ອງຂອງ ຮັນນາ, ຍິງຜູ້ໂສກເສົ້າສິ້ນຫວັງຄົນນຶ່ງທີ່ມີຄວາມປາຖນາຢາກໄດ້ລູກນ້ອຍ (1 ຊມອ ບົດທີ່ 1). ເອລີໄດ້ຮັບໃຊ້ໃນສອງຕຳແໜ່ງຄືຜູ້ພິພາກສາ ແລະມະຫາປະໂລຫິດ ຢູ່ໃນທັມມະສາລາ ຊີໂລ(Siloh). ລູກຊາຍ 2 ຄົນຂອງເພິ່ນ

ໄດ້ຮັບໃຊ້ໃນຕຳແໜ່ງປະໂລຫິດພາຍໃຕ້ພໍ່ຂອງພວກເຂົາເຈົ້າ(ຂໍ້ 3). ລູກຊາຍສອງຄົນຂອງເອລີເປັນຄົນຊົ່ວຮ້າຍ. ໃນການບໍ່ນັບຖືກົດໝາຍທັງໝົດທີ່ໄດ້ມອບໃຫ້ໂດຍໂມເຊ, ໂຮບນີ ແລະ ຟີເນຮາ ໄດ້ໃຊ້ລະບົບເຄື່ອງຖວາຍບູຊາເພື່ອລ້ຽງດູຄວາມຂີ້ຄ້ານຂອງຕົນ. ນອກຈາກນັ້ນ, ພວກເຂົາເຈົ້າໄດ້ໝິ່ນປມາດໜ້າທີ່ຂອງປະໂລຫິດດ້ວຍການຜິດສິນທັມທາງເພດ. ທຸກຄົນໃນອິສຣາເອນລວມທັງເອລີ ຮູ້ເຖິງຄວາມຊົ່ວຮ້າຍຂອງພວກເຂົາເຈົ້າ. ພວກເຮົາເຫັນໃນບົດຮຽນຊ່ວງນີ້ວ່າ, ໃນຂນະທີ່ ເອລີ ຄັດຄ້ານໃນສິ່ງທີ່ພວກລູກຊາຍຂອງລາວໄດ້ເຮັດ, ລາວບໍ່ໄດ້ຕີສອນພວກເຂົາເຈົ້າຢ່າງໜັກແໜ້ນ. ປະໂລຫິດທັງສອງຕ້ອງຮັບຜິດຊອບຕໍ່ການບໍ່ເຊື່ອຟັງຂອງຕົນເອງ, ແຕ່ຄວາມຮັບຜິດຊອບບາງຢ່າງຕົກເປັນຂອງ ເອລີ ສຳລັບການລ້ຽງດູລູກແບບເສີຍເມີຍ(ບໍ່ຫົວຊາ).

*ຜູ້ຄົນຈຳນວນຫຼາຍໃນວັທນະທັມຂອງພວກເຮົາຫັນໄປບ່ອນໃດເພື່ອຂໍຄຳແນະນຳ?*

ເອລີ ລົ້ມເຫຼວໃນການແນະນຳແລະໃຊ້ລະບຽບວິນັຍຢ່າງຖືກຕ້ອງກັບລູກຊາຍຂອງລາວ. ແຕ່ພຣະເຈົ້າ, ໂດຍພຣະເມດຕາຂອງພຣະອົງ, ໄດ້ຊົງໃຫ້ແກ່ ເອລີ ໂອກາດທີ່ສອງກັບຊາຍໜຸ່ມ ຊາມູເອນ. ຊາມູເອນເປັນຄຳຕອບສຳລັບຄຳອະທິຖານທີ່ໝົດຫວັງຈາກນາງຮັນນາ ແມ່ຂອງລາວ. ເນື່ອງຈາກວ່າພຣະເຈົ້າຊົງໄດ້ຍິນຄຳອະທິຖານຂອງນາງສຳລັບເດັກນ້ອຍ, ຮັນນາ ໄດ້ຕັດສິນໃຈທີ່ຈະອຸທິດ ຊາມູເອນ ໃຫ້ຮັບໃຊ້ພຣະເຈົ້າ. ເມື່ອຍັງເປັນເດັກນ້ອຍ, ຊາມູເອນຖືກພາຕົວໄປພຣະວິຫານບ່ອນທີ່ລາວຈະຮັບໃຊ້ພາຍໃຕ້ເອລີ. ຫຼັງຈາກການບັນຍາຍເຖິງຄວາມຊົ່ວຮ້າຍຂອງລູກຊາຍສອງຄົນຂອງເອລີ, ພວກເຮົາເຫັນວ່າ "ໃນທາງກົງກັນຂ້າມ, ເດັກຊາຍຊາມູເອນໄດ້ເຕີບໃຫຍ່ຂຶ້ນເປັນຊາຍທີ່ພໍພຣະທັຍຂອງພຣະຜູ້ເປັນເຈົ້າ ແລະເປັນທີ່ພໍໃຈຂອງຜູ້ຄົນທັງຫຼາຍ". ເອລີອາດລົ້ມເຫຼວກັບລູກຊາຍຂອງຕົນ, ແຕ່ກັບຊາມູເອນ, ເອລີໄດ້ປະສົບຜົນສຳເລັດ. ພາຍໃຕ້ການດູແລຂອງເອລີ, ຊາມູເອນໄດ້ເຕີບໃຫຍ່ຂຶ້ນເປັນຄົນທີ່ຍິ່ງໃຫຍ່ຂອງພຣະເຈົ້າ.

ພວກເຮົາອາດຈະເຮັດຜິດພາດໃນອະດີດ, ແຕ່ສິ່ງນັ້ນບໍ່ຈຳເປັນຕ້ອງຂັດຂວາງພວກເຮົາຈາກການເປັນຜູ້ໃຫ້ຄຳປຶກສາທີ່ມີປະສິດທິພາບໃນປະຈຸບັນ. ນັບວ່າຈະເປັນການສລາດທີ່ພວກເຮົາຈະຫຼຽວຄືນຫລັງເປັນບາງຄັ້ງບາງຄາວເພື່ອປະເມີນຜົນຄວາມກ້າວໜ້າຂອງພວກເຮົາໃນການຮັບໃຊ້ຄົນອື່ນ. ພຣະເຈົ້າຊົງສາມາດເຮັດໃຫ້ພວກເຮົາເຕີບໂຕຜ່ານຄວາມຜິດພາດຂອງພວກເຮົາ, ແລະພວກເຮົາບໍ່ຈຳເປັນຕ້ອງຢ້ານທີ່ຈະແບ່ງປັນຄວາມລົ້ມເຫຼວຂອງພວກເຮົາກັບຄົນອື່ນ. ຄົນອື່ນສາມາດຮຽນຮູ້ຈາກຄວາມຜິດພາດຂອງພວກເຮົາ. **ພຣະເຈົ້າຊົງຢູ່ໃນທຸຣະກິດທີ່ຈະເອົາຄວາມເປິເປື້ອນຜິດພາດຂອງພວກເຮົາແລະພຣະອົງຈະຊົງນຳໃຊ້ພວກມັນເພື່ອການເຕີບໂຕຂອງພວກເຮົາ ແລະການເຕີບໂຕຂອງຄົນອື່ນ.**

## 2. 1 ຊາມູເອນ 3:7-10

*7ຊາມູເອນ ກໍຍັງບໍ່ທັນຮູ້ຈັກພຣະຜູ້ເປັນເຈົ້າ ເພາະວ່າພຣະອົງຍັງບໍ່ເຄີຍເວົ້າກັບລາວມາກ່ອນ. 8ພຣະຜູ້ເປັນເຈົ້າເອີ້ນ ຊາມູເອນອີກ*
*ເປັນເທື່ອທີສາມ ລາວກໍລຸກຂຶ້ນອີກແລະໄປຖາມເອລີວ່າ, "ທ່ານເອີ້ນຂ້ານ້ອຍບໍ? ຂ້ານ້ອຍຢູ່ນີ້ແລ້ວ." ແລ້ວ ເອລີ ກໍເຂົ້າໃຈວ່າແມ່ນ*
*ພຣະຜູ້ເປັນເຈົ້າເປັນຜູ້ຊົງເອີ້ນເດັກຊາຍນີ້. 9ດັ່ງນັ້ນເພິ່ນຈຶ່ງເວົ້າຕໍ່ລາວວ່າ, "ຈົ່ງກັບຄືນໄປນອນສາ ແລະຖ້າວ່າເພິ່ນເອີ້ນເຈົ້າອີກໃຫ້*
*ເຈົ້າເວົ້າວ່າ, "ຜູ້ຮັບໃຊ້ຂອງພຣະອົງກຳລັງຟັງຢູ່ ຂໍພຣະອົງຊົງຮັບສັ່ງເຖີ້ນ" ແລ້ວຊາມູເອນກໍກັບຄືນໄປນອນ. 10ຕໍ່ມາອີກ ພຣະຜູ້ເປັນ-*
*ເຈົ້າໄດ້ມາເອີ້ນຢູ່ບ່ອນນັ້ນຄືແຕ່ກ່ອນວ່າ, "ຊາມູເອນ ຊາມູເອນ" ຊາມູເອນກໍຕອບຂຶ້ນວ່າ, "ຜູ້ຮັບໃຊ້ຂອງພຣະອົງກຳລັງຟັງຢູ່ຂໍພຣະ-*
*ອົງຊົງຮັບສັ່ງເຖີ້ນ."*

ໃນຊ່ວງປວັດສາດຂອງອິສຣາເອນຕາມທີ່ບັນທຶກໄວ້ໃນພຣະຄັມພີພຣະສັນຍາເດີມ, ມີລະຍະເວລາຂອງພັຍພິບັດດິນແຫ້ງແລ້ງຈາກພຣະຄຳຂອງພຣະເຈົ້າ. ໃນລະຍະເວລາທັງໝົດທີ່ບັນລະຍາຍໄວ້ໃນພຣະຄັມພີ ພວກຜູ້ປົກຄອງ, ບັນດາຜູ້ທຳນວາຍຈາກພຣະເຈົ້າໄດ້ປາກົດຕົວພຽງແຕ່ສອງຄັ້ງ (ຜປຄ 4:4 ແລະ 6:8). ພຣະຄັມພີ 1 ຊາມູເອນ 3:1 ຊີ້ໃຫ້ເຫັນການແຫ້ງແລ້ງນີ້ *"ຊາມູເອນໄດ້ຮັບໃຊ້ພຣະຜູ້ເປັນເຈົ້າພາຍໃຕ້ການນຳພາຂອງ ເອລີໃນເວລາທີ່ຮັບໃຊ້ຢູ່ນັ້ນກໍບໍ່ຄ່ອຍມີຖ້ອຍຄຳຈາກພຣະຜູ້ເປັນເຈົ້າປານໃດ ແລະດົນໆຈຶ່ງຄ່ອຍມີນິມິດເທື່ອນຶ່ງ."* ດ້ວຍການສໍ້ລາດບັງຫຼວງຂອງບັນດາປະໂລຫິດ, ແລະການບໍ່ຫົວຊາ(ເມີນເສີຍ)ຕໍ່ພຣະເຈົ້າຂອງປະຊາຊົນ, ການ

ຂາດການຊົງນຳພາຂອງພຣະເຈົ້າບໍ່ໜ້າຈະເປັນການປລາດໃຈຫຍັງເລີຍ. ຄວາມມິດງຽບດັ່ງກ່າວເປັນການຊົງຕັດສິນຈາກພຣະເຈົ້າໂດຍບໍ່ຕອ້ງສົງສັຍ. ສິ່ງທັງໝົດນັ້ນກຳລັງຈະປ່ຽນໄປກັບເດັກຊາຍ ຊາມູເອນ.

ເຖິງແມ່ນວ່າ ຊາມູເອນ ໄດ້ຄວາມຮູ້ເພີ້ມຂື້ນໃນເຣື່ອງຂອງພຣະເຈົ້າ, ແຕ່ລາວຍັງບໍ່ທັນໄດ້ຮັບຄຳສັ່ງໂດຍກົງຈາກພຣະເຈົ້າເທື່ອ. ສະພາບການນັ້ນໄດ້ປ່ຽນແປງໃນເຊົ້າວັນນຶ່ງໃນເມື່ອພຣະເຈົ້າໄດ້ຊົງກ່າວກັບຊາມູເອນ: "ກ່ອນຕະກຽງຂອງພຣະເຈົ້າຈະມອດໄປ" (ຂໍ້ 3). ຕະກຽງຈະຖືກໄຕ້ຂື້ນຕັ້ງແຕ່ເວລາຫົວຄ່ຳຈົນເຖິງຮຸ່ງເຊົ້າ (ອພຍ 27:21), ດັ່ງນັ້ນການຜະເຊີນໜ້າກັບພຣະເຈົ້າຂອງຊາມູເອນຈຶ່ງໄດ້ເກີດຂື້ນໃນຊົ່ວໂມງກ່ອນຕາເວັນຂື້ນ. ພຣະເຈົ້າໄດ້ຊົງເວົ້າກັບຊາມູເອນສີ່ຄັ້ງ. ໃນສາມຄັ້ງແລກຊາມູເອນຄິດວ່າແມ່ນເອລີຮ້ອງລາວ, ແລະທຸກຄັ້ງທີ່ຊາມູເອນໄປຫາເອລີ ພຽງແຕ່ໄດ້ຖືກບອກວ່າເອລີບໍ່ໄດ້ຮ້ອງລາວ. ຫຼັງຈາກຄັ້ງທີ່ສາມ, ເອລີ ສະເດືອກຮູ້ວ່າແມ່ນພຣະເຈົ້າເປັນຜູ້ຊົງຮຽກເອີ້ນຊາມູເອນ. ເອລີໄດ້ໃຫ້ຄຳສັ່ງງ່າຍໆແກ່ຊາມູເອນ, ຈະຕ້ອງເວົ້າສິ່ງໃດສິ່ງນຶ່ງຖ້າຫາກພຣະເຈົ້າຊົງເວົ້າກັບລາວອີກວ່າ: **"ຂໍຊົງໂຜດເວົ້າມາເຖີດພຣະເຈົ້າ, ຂ້າຮັບໃຊ້ຂອງພຣະອົງກຳລັງຟັງຢູ່"**

ພຣະເຈົ້າຊົງເອີ້ນຊາມູເອນອີກເປັນຄັ້ງທີ່ສີ່. ເທື່ອນີ້ຊາມູເອນໄດ້ຕອບພຣະເຈົ້າ. ມັນແມ່ນຕອນນັ້ນເອງທີ່ພຣະເຈົ້າໄດ້ຊົງເປີດເຜີຍພຣະວັຈນະຂອງພຣະອົງແກ່ຊາມູເອນ, ຊຶ່ງເປັນຂ່າວສານແຫ່ງການພິພາກສາ ເອລີ ແລະຄອບຄົວຂອງລາວ. ລູກຊາຍຂອງເອລີຖືກຕັດສິນເພາະວ່າໝິ່ນປມາດພຣະເຈົ້າຍ້ອນຄວາມຊົ່ວຊ້າຂອງພວກເຂົາເຈົ້າໃນຂນະທີ່ຮັບໃຊ້ຢູ່ໃນທັມມະສາລາ(ຫໍເຕັນ). ການພິພາກສາຂອງພຣະເຈົ້າກໍຕົກຢູ່ທີ່ ເອລີ ເຊັ່ນດຽວກັນ, ຊຶ່ງການພິພາກສາຂອງພຣະອົງໄດ້ເກີດຂື້ນເພາະວ່າລາວບໍ່ໄດ້ໃຊ້ລະບຽບວິນັຍ (ຕີສອນ) ໂຮບນີ ແລະ ພີເນຮາ. ລາວ(ເອລີ)ໄດ້ເປັນຄົນອ່ອນແອແລະອ່ອນໂຍນ ທີ່ບໍ່ຍອມຕໍ່ຕ້ານຄວາມຊົ່ວຮ້າຍຂອງລູກຊາຍຂອງລາວ. ຖ້ອຍຄຳເຫຼົ່ານີ້ຈາກພຣະເຈົ້າໄດ້ຢືນຢັນຂ່າວສານແຫ່ງຜູ້ປະກາດພຣະທັມທີ່ເອລີເຄີຍໄດ້ຍິນມາແລ້ວ.

ແມ່ນແຕ່ໃນຂນະທີ່ ເອລີ ໄດ້ຊ່ອຍໃຫ້ ຊາມູເອນເຂົ້າໃຈວ່າພຣະເຈົ້າຊົງກຳລັງເວົ້າກັບລາວ, ພວກເຮົາສາມາດໃຊ້ປະສົບການຂອງພວກເຮົາໃນການຄົ້ນພົບການຊົງນຳວິຖີທາງຂອງພຣະອົງໃນຊີວິດຂອງພວກເຮົາ ເພື່ອຊ່ອຍໃຫ້ຄົນອື່ນໆໄດ້ຮູ້ວ່າພວກເຂົາເຈົ້າຈະແຍກແຍະພຣະສຸຣະສຽງຂອງພຣະເຈົ້າໄດ້ແນວໃດ.

*ເມື່ອໃດທີ່ມີໃຜຜູ້ນຶ່ງໄດ້ຊ່ອຍທ່ານໃຫ້ແຍກແຍະພຣະສຸຣະສຽງຂອງພຣະເຈົ້າ?*

### 3. 1 ຊາມູເອນ 3:15-18

*[15]ຊາມູເອນນອນຫລັບໄປຈົນຮອດມື້ເຊົ້າ ແລ້ວໄດ້ລຸກຂຶ້ນໄປໄຂປະຕູພຣະວິຫານ ແຕ່ລາວບໍ່ກ້າບອກນິມິດນີ້ແກ່ເອລີ. [16]ເອລີ ຈຶ່ງເອີ້ນ
ລາວວ່າ, "ຊາມູເອນລູກເອີຍ!" ຊາມູເອນ ຕອບວ່າ, "ຂ້ານ້ອຍຢູ່ນີ້." [17]ເອລີໄດ້ຖາມລາວວ່າ "ພຣະຜູ້ເປັນເຈົ້າໄດ້ບອກເຈົ້າວ່າຢ່າງ-
ໃດ? ຢ່າປິດບັງພໍ່ເລີຍ ຖ້າເຈົ້າບໍ່ບອກພໍ່ໃນສິ່ງທີ່ພຣະອົງຊົງກ່າວແກ່ເຈົ້ານັ້ນ ພຣະເຈົ້າຈະລົງໂທດເຈົ້າຢ່າງຮ້າຍແຮງທີ່ສຸດ." [18]ດັ່ງ-
ນັ້ນ ຊາມູເອນ ຈຶ່ງບອກເພິ່ນທຸກຢ່າງໂດຍບໍ່ໄດ້ປິດບັງຫຍັງໝົດ ແລ້ວ ເອລີ ຈຶ່ງເວົ້າວ່າ, "ພຣະອົງເປັນພຣະຜູ້ເປັນເຈົ້າ ໃຫ້ພຣະອົງ
ຊົງກະທຳທຸກຢ່າງຕາມນ້ຳພຣະທັຍຂອງພຣະອົງເຖີ້ນ."*

ມັນບໍ່ພຽງພໍທີ່ຈະໄດ້ຍິນພຣະສຸຣະສຽງຂອງພຣະເຈົ້າເທົ່ານັ້ນ, ພວກເຮົາຈຳເປັນຕ້ອງເຊື່ອຟັງນຳອີກ. ການໄດ້ຍິນແລະການເຊື່ອຟັງຄຽງຂ້າງກັນໄປເໝືອນມືຢູ່ໃນຖົງມື. ພຣະເຈົ້າໄດ້ຊົງເປີດເຜີຍໃຫ້ ຊາມູເອນ ໄດ້ຮູ້ຂໍ້ຄວາມກ່ຽວກັບ ເອລີ ແລະກ່ຽວກັບຄອບຄົວຂອງລາວ, ແລະຊາມູເອນໄດ້ເຊື່ອຟັງທັງສອງຄື: ເຊື່ອຟັງ ເອລີ ແລະເຊື່ອຟັງພຣະເຈົ້າຊຶ່ງພຣະອົງຊົງໄດ້ໃຫ້ຂໍ້ຄວາມນັ້ນ.

*ກຸ່ມຂອງພວກເຮົາຈະຊ່ວຍກັນຈັດຕຽມເຊິ່ງກັນແລະກັນແນວໃດເພື່ອແບ່ງປັນແລະຮັບຄວາມຈິງຂອງພຣະເຈົ້າ?*

ພຣະເຈົ້າບໍ່ຊົງສາມາດມອງຂ້າມຄວາມບໍ່ສົນໃຈທາງຝ່າຍຈິດວິນຍານຂອງ ເອລີແລະຄວາມຊົ່ວຮ້າຍຂອງລູກຊາຍຂອງລາວ. ພວກເຂົາເຈົ້າອາດບໍ່ເຊື່ອຖືໄດ້ທີ່ຈະໄດ້ຍິນພຣະຄຳຂອງພຣະເຈົ້າ, ແຕ່ຊາມູເອນໄດ້ພິສູດແລ້ວວ່າລາວເປັນຜູ້ທີ່ພຣະເຈົ້າຊົງໄວ້ວາງໃຈໃຫ້ເປັນຜູ້ນຳຂອງຊາດ. ໃນລະຍະຫຼາຍປີຂ້າງໜ້າ, ພຣະເຈົ້າຈະຊົງເວົ້າກັບ ຊາມູເອນຢູ່ເລື້ອຍໆ ແລະເປັນທີຂອງລາວທີ່ຈະໄດ້ນຳພຣະຄຳຂອງ

ພຣະເຈົ້າມາສູ່ຊົນຊາດອິສຣາເອນ. ຊາມູເອນ ມີຄວາມຢ້ານໃນວຽກທີ່ຈະບອກ ເອລີ ຂ່າວສານຈາກພຣະເຈົ້າ. ເອລີ ໄດ້ເປັນຜູ້ໃຫ້ຄຳປຶກສາທີ່ສຸພາບອ່ອນນ້ອມແກ່ຊາມູເອນ ແລະການສົ່ງຂໍ້ຄວາມດັ່ງກ່າວເປັນຄວາມເສົ້າສລົດໃຈຢ່າງຍິ່ງຕໍ່ຫົວໃຈຂອງຊາມູເອນ. ແຕ່ເມື່ອຖືກຖາມໂດຍເອລີ, ຊາມູເອນໄດ້ບອກ ເອລີ ເຖິງຂໍ້ຄວາມທັງໝົດຈາກພຣະເຈົ້າ. ຄຳຕອບຂອງເອລີແມ່ນງ່າຍດາຍ: "ພຣະອົງຊົງເປັນພຣະຜູ້ເປັນເຈົ້າ, ໃຫ້ພຣະອົງຊົງກະທຳໃນສິ່ງທີ່ພຣະອົງຊົງຄິດວ່າດີ." ຕອນນີ້ ເອລີເປັນຊາຍຜູ້ເຖົ້າຜູ້ນຶ່ງ ທີ່ຮັບຮູ້ວ່າລາວລົ້ມເຫຼວໃນການລ້ຽງລູກຊາຍຂອງລາວ. ດ້ວຍເຫດນັ້ນ, ບາງທີລາວອາດຈະຮູ້ໄດ້ວ່າລາວເປັນຜູ້ລົ້ມເຫຼວໃນຖານະເປັນຜູ້ນຳທາງດ້ານຈິດວິນຍານຂອງຊາດ. ຄຳຖະແຫຼງທີ່ມາຈາກເອລີ ສ່ວນຫຼາຍອາດຈະເປັນຄຳບັນລະຍາຍຂອງຄວາມສິ້ນຫວັງ ແລະຂອງການຍອມຈຳນົນ. **ສິ່ງທັງໝົດທີ່ ເອລີ ສາມາດເຮັດໄດ້ແມ່ນລໍຖ້າຈຸດຈົບຂອງຊີວິດ(ຕາຍ)ທີ່ຈະມາເຖິງ.**

ພວກເຮົາບໍ່ຄວນຫັນຫຼັງຈາກການແບ່ງປັນພຣະຄຳຂອງພຣະເຈົ້າກັບຄົນອື່ນ, ເຖິງແມ່ນວ່າມັນເປັນເຣື່ອງຍາກທີ່ຄົນອື່ນຈະໄດ້ຍິນກໍຕາມ. ພຣະເຈົ້າຊົງສາມາດໃຊ້ພວກເຮົາໃຫ້ແບ່ງປັນການຕັກເຕືອນກັບຄົນອື່ນ ເພື່ອຊ່ວຍເຫຼືອພວກເຂົາເຈົ້າໃຫ້ຫຼີກເວັ້ນຈາກທາງເລືອກຊຶ່ງຈະນຳໄປສູ່ຄວາມຫາຍຍະນະ(ຈິບຫາຍ)ໃນຊີວິດຂອງພວກເຂົາເຈົ້າ. ພວກເຮົາມີໜ້າທີ່ຮັບຜິດຊອບທີ່ຈະຊ່ວຍຄົນອື່ນໃຫ້ຫຼີກເວັ້ນຈາກແບບແຜນທີ່ຈະນຳຄວາມຈິບຫາຍມາໃຫ້ ແລະຫຼີກເວັ້ນຈາກການເລືອກທີ່ທຳລາຍໃນຊີວິດ. **ພວກເຮົາບໍ່ສົມຄວນລັງເລໃຈທີ່ຈະໃຊ້ອິດທິພົນຂອງພວກເຮົາເພື່ອຊ່ວຍເຫຼືອຄົນອື່ນ.**

*ພວກເຮົາສາມາດຮຽນຮູ້ຫຍັງຈາກຄວາມສັມພັນລະຫວ່າງເອລີແລະຊາມູເອນ?*

## ນຳໃຊ້ໃນຊີວິດ:

ພວກເຮົາບໍ່ສົມຄວນປ່ອຍໃຫ້ຄວາມຜິດພາດໃນອະດີດ ໃຫ້ມັນມາຂັດຂວາງພວກເຮົາຈາກການເປັນຜູ້ໃຫ້ຄຳປຶກສາທີ່ມີປະສິດທິພາບ. ເລືອກນຶ່ງໃນການນຳໃຊ້ໃນຊີວິດຕໍ່ລົງໄປນີ້:

- **ຈົ່ງປະເມີນຜົນ.** ຈົ່ງປະເມີນຜົນວ່າທ່ານກຳລັງຟັງພຣະສຸຣະສຽງຂອງພຣະເຈົ້າດີປານໃດ. ຈົ່ງໃຫ້ຄຳໝັ້ນສັນຍາແກ່ຕົນເອງວ່າຈະອ່ານພຣະຄຳຂອງພຣະເຈົ້າທຸກໆວັນ ເພື່ອຈະໄດ້ຮັບຄວາມເຂົ້າໃຈແລະການຊົງຊີ້ນຳ(ທິດທາງ)ຈາກພຣະຄຳຂອງພຣະອົງ.
- **ຈົ່ງຂອບໃຈ.** ຈົ່ງກ່າວຄຳຂອບໃຈຕໍ່ຄົນອື່ນທີ່ໄດ້ແບ່ງປັນພຣະຄຳຂອງພຣະເຈົ້າກັບທ່ານ ແລະຊ່ວຍທ່ານໃຫ້ມອງເຫັນທິດທາງຂອງພຣະເຈົ້າສຳລັບຊີວິດຂອງທ່ານ. ໃນຈົດໝາຍນ້ອຍ, ອີເມລ໌, ຫຼື ຂໍ້ຄວາມ, ບອກໃຫ້ແຈ່ມແຈ້ງແລະເຈາະຈົງວ່າພວກເຂົາເຈົ້າໄດ້ຊ່ວຍທ່ານແນວໃດ.
- **ຈົ່ງເວົ້າຢ່າງກ້າຫານ.** ໃນເມື່ອທ່ານມອງເຫັນຄົນອື່ນຫຼົງ(ເດີນທາງຜິດ)ຈາກພຣະຄັມພີ ແລະພຣະປະສົງຂອງພຣະເຈົ້າໃນຊີວິດຂອງພວກເຂົາເຈົ້າ, ຈົ່ງໂອ້ລົມກັບພວກເພິ່ນດ້ວຍຄວາມອ່ອນໂຍນແລະດ້ວຍຄວາມເຄົາລົບ. ຈົ່ງຊຸກຍູ້ໜູນໃຈໃຫ້ພວກເຂົາເຈົ້າໃຫ້: ສແວງຫາພຣະເຈົ້າ, ໄວ້ວາງໃຈໃນພຣະອົງ, ແລະເຊື່ອຟັງພຣະອົງ.

ບໍ່ວ່າພວກເຮົາຈະເປັນທີ່ຮູ້ຈັກໃນບາງສິ່ງບາງຢ່າງວ່າ: “**ຍິ່ງໃຫຍ່ທີ່ສຸດ**” ຫຼືນ້ອຍກວ່ານັ້ນຫຼວງຫຼາຍ, ຄວາມຈິງກໍຄືວ່າພວກເຮົາທຸກຄົນໄດ້ເຄີຍເຮັດຜິດພາດ. ຂອບພຣະຄຸນພຣະເຈົ້າທີ່ພຣະອົງຊົງສາມາດຮັບເອົາຄວາມຜິດພາດເຫຼົ່ານັ້ນຂອງພວກເຮົາ ແລະຊົງໃຊ້ພວກມັນ(ຄວາມຜິດພາດ)ເພື່ອຊ່ວຍເຫຼືອບັນດາຄົນອື່ນໆໃຫ້ປະສົບຄວາມສຳເລັດສຳລັບພຣະອົງ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ https://ulsb.org/sunday-school-2/ ແປໂດຍ SSK**